6

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---====000====---

221

ກະຊວງໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 221 /ປທສ
ນະຄອນຫຼວງວຽງຈັນ, ວັນທີ: 02 FEB 2015

# ຂໍ້ຕົກລົງ
# ວ່າດ້ວຍການອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບປັບປຸງສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບເລກທີ 02/ ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາ ວຽກງານອອກໃບອະນຸຍາດດ້ານໂທລະຄົມມະນາຄົມ ເພື່ອໃຫ້ວຽກງານດັ່ງກ່າວມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເປັນເອກະພາບ, ຍຸຕິທຳ ແນ່ໃສ່ ຮັບປະກັນການດຳເນີນທຸລະກິດດ້ານໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການ ມີປະສິດທິພາບ, ປະສິດທິຜົນ ປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ການອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມ**

ການອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມແມ່ນ ການຢັ້ງຢືນສິດ ໃຫ້ບຸກຄົນ ຫຼື ນິຕິບຸກຄົນປະກອບກິດຈະການໂທລະຄົມມະນາຄົມໃຫ້ຖືກຕ້ອງຕາມລະບຽບກົດໝາຍຂອງ ສ.ປ.ປ ລາວ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໃຫ້ບໍລິການເຄືອຂ່າຍ** ໝາຍເຖິງ ການສ້າງໂຄງຮ່າງພື້ນຖານເຊັ່ນ: ເຄືອຂ່າຍໂທລະສັບຕັ້ງໂຕະ, ເຄືອຂ່າຍໂທລະສັບມືຖື, ເຄືອຂ່າຍອິນເຕີເນັດມີສາຍ ແລະ ເຄືອຂ່າຍອິນເຕີເນັດບໍ່ມີສາຍ;
2. **ລະບົບສາຍສົ່ງ** ໝາຍເຖິງ ລະບົບສົ່ງຂໍ້ມູນໂດຍຜ່ານສາຍ, ຄື້ນວິທະຍຸ ແລະ ອຸປະກອນຕົ້ນທາງ ແລະ ປາຍທາງ;
3. **ການບໍລິການເສີມໂທລະຄົມມະນາຄົມ** ໝາຍເຖິງ ການບໍລິການເພີ່ມເຕີມນອກຈາກການບໍລິການໂທລະຄົມມະນາຄົມເປັນພື້ນຖານທີ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ກຳນົດໃຫ້;

4. **ການບໍລິການເສີມອິນເຕີເນັດ** ໝາຍເຖິງ ການບໍລິການເພີ່ມເຕີມນອກຈາກການບໍລິການອິນເຕີເນັດເປັນພື້ນຖານທີ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ ກຳນົດໃຫ້;
5. **ຜູ້ໃຫ້ບໍລິການໂທລະສັບມືຖືທີ່ບໍ່ມີເຄືອຂ່າຍເປັນຂອງຕົນເອງ** ໝາຍເຖິງ ຜູ້ໃຫ້ບໍລິການໂທລະສັບມືຖືໂດຍທີ່ເຊົ່າເຄືອຂ່າຍຂອງຜູ້ອື່ນເພື່ອທຳການບໍລິການຂອງຕົນເອງ;

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງດຳເນີນທຸລະກິດດ້ານໂທລະຄົມມະນາຄົມຢູ່ ສ.ປ.ປ ລາວ.

## ໝວດທີ 2
## ປະເພດປະກອບກິດຈະການໂທລະຄົມມະນາຄົມ

**ມາດຕາ 5. ປະເພດປະກອບກິດຈະການໂທລະຄົມມະນາຄົມ**

ປະເພດປະກອບກິດຈະການໂທລະຄົມມະນາຄົມ ມີ ສີ່ ປະເພດ ດັ່ງນີ້:

1. ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ໜຶ່ງ;
2. ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສອງ;
3. ການປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສາມ;
4. ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສີ່.

**ມາດຕາ 6. ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ໜຶ່ງ**

ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ໜຶ່ງ ແມ່ນການໃຫ້ບໍລິການເຄືອຂ່າຍໂຄງລ່າງພື້ນຖານ ແລະ ສະໜອງບໍລິການໂທລະຄົມມະນາຄົມ, ຊຶ່ງມີລາຍລະອຽດດັ່ງນີ້:

1. ການໃຫ້ບໍລິການເຄືອຂ່າຍປະກອບ ມີ ກິດຈະການດັ່ງນີ້:
   - ການໃຫ້ບໍລິການເຄືອຂ່າຍ;
   - ລະບົບເຄືອຂ່າຍຮັບສົ່ງສັນຍານໂທລະສັບແບບມີສາຍ ແລະ ບໍ່ມີສາຍ;
   - ລະບົບສາຍສົ່ງ.
2. ສະໜອງບໍລິການໂທລະຄົມມະນາຄົມປະກອບ ມີ ກິດຈະການດັ່ງນີ້:
   - ສະຖານີຮັບສົ່ງສັນຍານດາວທຽມພາກພື້ນດິນ;
   - ໂທລະສັບແບບມີສາຍ ແລະ ບໍ່ມີສາຍ;
   - ການໃຫ້ບໍລິການສາຍເຊົ່າ;
   - ເຊື່ອມຕໍ່ເຄືອຂ່າຍໂທລະສັບຕ່າງປະເທດ;
   - ເຊື່ອມຕໍ່ເຄືອຂ່າຍໂທລະສັບພາຍໃນປະເທດ;
   - ເຊື່ອມຕໍ່ເຄືອຂ່າຍອິນເຕີເນັດຕ່າງປະເທດ;
   - ເຊື່ອມຕໍ່ເຄືອຂ່າຍອິນເຕີເນັດພາຍໃນປະເທດ;
   - ທາງຜ່ານສຳລັບອິນເຕີເນັດ.

**ມາດຕາ 7. ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສອງ**

ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສອງ ແມ່ນ ການສະໜອງບໍລິການໂທລະຄົມມະນາຄົມສຳລັບຜູ້ທີ່ບໍ່ມີເຄືອຂ່າຍເປັນຂອງຕົນເອງມີ ສີ່ ລັກສະນະດັ່ງນີ້:

1. ອິນເຕີເນັດ: ການສະໜອງການໃຫ້ບໍລິການອິນເຕີເນັດ;
2. ລະຫັດອິນເຕີເນັດ: ການໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ;

3. ການເຊື່ອມຕໍ່ອິນເຕີເນັດ: ການສະໜອງການເຊື່ອມຕໍ່ອິນເຕີເນັດ;
4. ການບໍລິການເສີມ: ການບໍລິການທີ່ບໍ່ນອນຢູ່ໃນການບໍລິການຫຼັກທີ່ສ້າງມູນຄ່າເພີ່ມ.

**ມາດຕາ 8. ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສາມ**

ທີ່ປະເພດປະກອບກິດຈະການໂທລະຄົມມະນາຄົມປະເພດ ສາມ ແມ່ນ ປະກອບມີ ສີ່ ລັກສະນະດັ່ງນີ້:

1. ການບໍລິການທີ່ປຶກສາດ້ານໂທລະຄົມມະນາຄົມ: ທີ່ປຶກສາດ້ານກົດໝາຍ, ດ້ານເຕັກນິກ, ດ້ານເຄືອຂ່າຍ
2. ຕິດຕັ້ງ ແລະ ສ້ອມແປງອຸປະກອນໂທລະຄົມມະນາຄົມ;
3. ສົ່ງອອກ ແລະ ນຳເຂົ້າອຸປະກອນໂທລະຄົມມະນາຄົມ;
4. ຜະລິດ ແລະ ຈຳໜ່າຍອຸປະກອນໂທລະຄົມມະນາຄົມ.

**ມາດຕາ 9. ການບໍລິການດ້ານໂທລະຄົມມະນາຄົມປະເພດທີ່ ສີ່**

ການບໍລິການດ້ານໂທລະຄົມມະນາຄົມປະເພດທີ່ ສີ່ ແມ່ນການບໍລິການທີ່ມີເຄືອຂ່າຍໂທລະຄົມມະນາຄົມທີ່ໃຊ້ສະເພາະຕົນເອງເທົ່ານັ້ນ ປະກອບ ມີ ດັ່ງນີ້:

- ລະບົບວິທະຍຸສື່ສານ (ເຄື່ອງສື່ສານໂຟນີ);
- ລະບົບ ວິທະຍຸຫຣັງ;
- ອື່ນ.

## ໝວດທີ 3
## ການອະນຸຍາດ, ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 10. ການອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງດຳເນີນທຸລະກິດໂທລະຄົມມະນາຄົມຕ້ອງປະກອບເອກະສານຄົບຖ້ວນ ເພື່ອສະເໜີຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 11. ເງື່ອນໄຂການອະນຸຍາດ**

ເງື່ອນໄຂຂອງການອະນຸຍາດ ມີ ດັ່ງນີ້:

1. ມີຖານະທາງດ້ານການເງິນທີ່ໝັ້ນຄົງ;
2. ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການພໍສົມຄວນທີ່ສົມຄູ່ກັບວຽກງານ;
3. ມີສຳນັກງານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານດ້ານຕ່າງໆຢ່າງພຽງພໍ ແລະ ເໝາະສົມກັບຂະໜາດຂອງກິດຈະການ;
4. ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຖືກຕ້ອງ ແລະ ຄົບຖ້ວນ;
5. ຕ້ອງປະກອບເອກະສານທີ່ກຳໜົດໄວ້ໃຫ້ຄົບຖ້ວນ.

**ມາດຕາ 12. ການປະກອບເອກະສານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງຂໍອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມຕ້ອງປະກອບເອກະສານດັ່ງນີ້:

1. ປະກອບເອກະສານການອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມ ປະເພດ ໜຶ່ງ, ສອງ ແລະ ສາມ ດັ່ງນີ້:

- ສັນຍາ ແລະ ຂໍ້ຜູກພັນຕ່າງໆ (ຖ້າມີການຮ່ວມທຶນກັນ);
- ຊີວະປະຫວັດຫຍໍ້ຂອງຜູ້ສ້າງຕັ້ງ;
- ໃບຢັ້ງຢືນຖານະການເງິນ ແລະ ປະສົບການຂອງຜູ້ສ້າງຕັ້ງ;
- ເອກະສານຢັ້ງຢືນກ່ຽວກັບການເປັນນິຕິບຸກຄົນຢູ່ຕ່າງປະເທດ (ຖ້າມີ);
- ສຳເນົາບັດປະຈຳຕົວ (ບຸກຄົນພາຍໃນ) ແລະ ສຳເນົາໜັງສືຜ່ານແດນ (ບຸກຄົນຕ່າງປະເທດ);
- ບົດວິພາກເສດຖະກິດ;
- ແຜນຜັງລະບົບເຕັກນິກ;
- ລະບຽບການຂອງວິສາຫະກິດ;
- ເອກກະສານອື່ນທີ່ເຫັນວ່າຈຳເປັນ.

2. ປະກອບເອກະສານການອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມ ປະເພດ ສີ່ ດັ່ງນີ້:

- ຄຳຮ້ອງຂໍຕາມແບບຟອມທີ່ນຳກົດໃຫ້;
- ສັນຍາ ແລະ ຂໍ້ຜູກພັນຕ່າງໆ (ຖ້າມີການຮ່ວມທຶນກັນ);
- ແຜນຜັງລະບົບເຕັກນິກ;
- ຊີວະປະຫວັດຫຍໍ້ຂອງຜູ້ສ້າງຕັ້ງ;
- ເອກະສານຢັ້ງຢືນກ່ຽວກັບການເປັນນິຕິບຸກຄົນ;
- ສຳເນົາບັດປະຈຳຕົວ (ບຸກຄົນພາຍໃນ) ແລະ ສຳເນົາໜັງສືຜ່ານແດນ (ບຸກຄົນຕ່າງປະເທດ);
- ເອກກະສານທີ່ກ່ຽວຂ້ອງກັບການອະນຸຍາດ;
- ເອກກະສານອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 13. ການພິຈາລະນາຄຳຮ້ອງ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕ້ອງພິຈາລະນາກ່ຽວກັບການອະນຸຍາດ ໃຫ້ຜູ້ຍື່ນຄຳຮ້ອງຢ່າງຊ້າບໍ່ໃຫ້ເກີນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ເມື່ອເຫັນວ່າ ເອກະສານຖືກຕ້ອງ ແລະ ຄົບຖ້ວນແລ້ວ ໃນກໍລະນີທາກເຫັນວ່າ ເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ແລະ ບໍ່ມີເງື່ອນໄຂ ຫຼື ບາງປະເພດບໍລິການທີ່ມີຄວາມຈຳເປັນຕ້ອງກວດສອບຜ່ານທາງດ້ານເຕັກນິກ ຫຼື ວິຊາການທີ່ຕ້ອງໃຊ້ເວລາຍາວກວ່ານັ້ນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

**ມາດຕາ 14. ການຕໍ່ອາຍຸໃບອະນຸຍາດ**

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມຕ້ອງປະກອບເອກະສານດັ່ງນີ້:

1. ໜັງສືສະເໜີ;
2. ໜັງສືອະນຸຍາດດຳເນີນທຸລະກິດ;
3. ສຳເນົາໜັງສືທະບຽນວິສາຫະກິດ;
4. ສຳເນົາໜັງສືທະບຽນອາກອນ;
5. ສຳເນົາບັດປະຈຳຕົວ (ຄົນພາຍໃນ) ຫຼື ສຳເນົາໜັງສືຜ່ານແດນ (ຄົນຕ່າງປະເທດ).

ສຳລັບການສະເໜີຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດປະຈຳປີແມ່ນໃຫ້ຕໍ່ກ່ອນໃບອະນຸຍາດໝົດກຳນົດ ສາມສິບ ວັນລັດຖະການ, ຖ້າບໍ່ສາມາດສະເໜີຂໍຕໍ່ອາຍຸໃບອະນຸຍາດທັນກຳນົດຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ກະຊວງໄປສະນີໂທລະຄົມມະ ແລະການສື່ສານ ຫລື ພະແນກ ປທສ ແຂວງ/ນະຄອນ ທີ່ເປັນຜູ້ອອກໃບອະນຸຍາດໃຫ້, ຖ້າບໍ່ແຈ້ງຖືວ່າມີຈຸດປະສົງທີ່ຈະຢຸດເຊົາດຳເນີນກິດຈະການ, ພາກສ່ວນທີ່ກ່ຽວຂ້ອງທີ່ອອກອະນຸຍາດໃຫ້ຈະດຳເນີນການຍຸບເລີກອອກອະນຸຍາດ.

**ມາດຕາ 15. ຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບອະນຸຍາດ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບອະນຸຍາດດຳເນີນທຸລະກິດ ແມ່ນ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 4
## ສິດ ແລະ ໜ້າທີ່

**ມາດຕາ 16. ສິດ ແລະ ໜ້າທີ່ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອອກໃບອະນຸຍາດໃນການດຳເນີນທຸລະກິດ. ການສືບຕໍ່ ແລະ ການໂຈະ ຫຼື ຍຸບເລີກວິສາຫະກິດບໍລິການໂທລະຄົມມະນາຄົມປະກອບມີກິດຈະການດັ່ງນີ້:

1. ໃຫ້ບໍລິການເຄືອຂ່າຍ ແລະ ສະໜອງບໍລິການໂທລະຄົມມະນາຄົມ;
2. ສະໜອງບໍລິການໂທລະຄົມມະນາຄົມສຳລັບຜູ້ທີ່ບໍ່ມີເຄືອຂ່າຍເປັນຂອງຕົນເອງ;
3. ຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມທີ່ໃຊ້ສະເພາະຕົນເອງເທົ່ານັ້ນ;
4. ລະຫັດອິນເຕີເນັດ.

**ມາດຕາ 17. ສິດ ແລະ ໜ້າທີ່ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫລວງ ເປັນຜູ້ອອກໃບອະນຸຍາດໃນການດຳເນີນທຸລະກິດ. ການສືບຕໍ່ ແລະ ການໂຈະ ຫຼື ຍຸບເລີກວິສາຫະກິດບໍລິການໂທລະຄົມມະນາຄົມປະກອບມີກິດຈະການດັ່ງນີ້:

1. ສະໜອງບໍລິການອິນເຕີເນັດ;
2. ການເຊື່ອມຕໍ່ອິນເຕີເນັດ;
3. ການບໍລິການເສີມ;
4. ການບໍລິການທີ່ປຶກສາດ້ານໂທລະຄົມມະນາຄົມ;
5. ຕິດຕັ້ງ ແລະ ສ້ອມແປງອຸປະກອນໂທລະຄົມມະນາຄົມ;
6. ສົ່ງອອກ ແລະ ນຳເຂົ້າອຸປະກອນໂທລະຄົມມະນາຄົມ ຕາມປະເພດອຸປະກອນທີ່ໄດ້ກຳນົດໄວ້ ຕາມສິດ, ຂອບເຂດທີ່ໄດ້ຮັບ;
7. ຜະລິດ ແລະ ຈຳໜ່າຍອຸປະກອນໂທລະຄົມມະນາຄົມ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 18. ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການ.**

ຫ້າມຜູ້ໃຫ້ບໍລິການໂທລະຄົມມະນາຄົມມີການກະທຳດັ່ງນີ້:

1. ໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດ;
2. ເອົາໃບອະນຸຍາດດຳເນີນທຸລະກິດໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນ;
3. ຫລົບຫລີກການປະຕິບັດພັນທະ, ເຊື່ອງອຳລາຍຮັບ-ພົນກຳໄລລວມທັງຕົວເລກການເສຍພາສີ-ອາກອນ;
4. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມຜູ້ໃຫ້ບໍລິການອື່ນ, ການຈັດຕັ້ງແລະພະນັກງານຂອງລັດ.
5. ມີການກະທຳອື່ນທີ່ເປັນຂໍ້ຫ້າມຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ. ɓ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19. ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ໃຫ້ການບໍລິການຫາກໄດ້ດຳເນີນງານຢ່າງມີຄຸນນະພາບຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ກຳນົດສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 20. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຫາກໄດ້ລະເມີດຂໍ້ກຳນົດສະບັບນີ້ຈະຖືກສຶກສາອົບຮົມ, ຖືກປັບໃໝ ຫຼື ຖືກລົງໂທດທາງແພ່ງ ຫຼື ທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 21. ມາດຕະການປັບໃໝ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດບົດບັນຍັດໃດໜຶ່ງຂອງຂໍ້ກຳນົດສະບັບນີ້ຈະຖືກປັບໃໝດັ່ງນີ້:

- ໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 10,000,000 ກີບ;
- ໃຫ້ບໍລິການນອກຈາກປະເພດ ແລະ ຂອບເຂດທີ່ໄດ້ຮັບອະນຸຍາດຈະຖືກປັບໃໝ 6,000,000 ກີບ;
- ເອົາໃບອະນຸຍາດດຳເນີນທຸລະກິດໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນຈະຖືກປັບໃໝ 8,000,000 ກີບ;
- ໂຄສະນາໃສ່ຮ້າຍປ້າຍສີຜູ້ໃຫ້ບໍລິການອື່ນອັນເຮັດໃຫ້ຄູ່ແຂ່ງຂັນເສຍຫາຍຈະຖືກປັບໃໝ 5,000,000 ກີບ.
- ການລາຍງານສະຖິຕິບໍລິມາດ, ມູນຄ່າການຜະລິດບໍ່ຖືກຕ້ອງຈະຖືກປັບໃໝ 3,000,000 ກີບ,
- ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຊ້າກ່ອນກຳນົດຈະຖືກປັບໃໝຕາມມູນຄ່າທັງໝົດຂອງການອອກໃບອະນຸຍາດດຳເນີນທຸລະກິດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດທີ່ປະກາດໃຊ້;

## ໝວດທີ 7
## ຂໍ້ກຳນົດສຸດທ້າຍ

**ມາດຕາ 22. ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະກຳມະການດັດສົມໂທລະຄົມມະນາຄົມ ເປັນຜູ້ຮັບຜິດຊອບ ແລະ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 23. ຜົນບັງຄັບໃຊ້**

ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ສິບຫ້າວັນ ນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດທະການ. /.

**ລັດຖະມົນຕີວ່າການ**

ຫຽມ ພົມມະຈັນ